ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ
ຖະໜົນ ເລກ 7, ບ້ານ ໂພນສະຫວັນກາງ, ເມືອງ ແປກ, ແຂວງ ຊຽງຂວາງ ໂທ: +856-61 260030-31 ແຟັກ: +856-61 260034

# ກອງປະຊຸມເຜີຍແຜ່ກົດໝາຍ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ




ໃນວັນທີ 25 ສິງຫາ 2021 ຢູ່ທີ່ຫ້ອງປະຊຸມໂຮງຮຽນການເມືອງ ແລະ ການປົກຄອງ ແຂວງຫົວພັນ ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ (ທຫລ.ຊຂ) ໄດ້ຈັດກອງປະຊຸມເຜີຍແຜ່ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດຂຶ້ນ ໂດຍພາຍໃຕ້ການເປັນປະທານຮ່ວມຂອງ ທ່ານ ເພັດສະລາດ ວົງພະຈັນ ຮອງຫົວໜ້າສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ ແລະ ທ່ານ ນາງ ແຍງເພັດ ບຸນມະນີໄຊ ຜູ້ອຳນວຍການໂຮງຮຽນການເມືອງ ແລະ ການປົກຄອງ ແຂວງຫົວພັນ, ມີບັນດາພະນັກງານ, ຄູ-ອາຈານ, ນັກສຶກສາພາຍໃນໂຮງຮຽນການເມືອງ ແລະ ການປົກຄອງແຂວງຫົວພັນ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ ທ່ານ ເພັດສະລາດ ວົງພະຈັນ ຮອງຫົວໜ້າສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ ໄດ້ມີຄຳຄິດເຫັນກ່າວເປີດກອງປະຊຸມຢ່າງເປັນທາງການ ເຊິ່ງຈຸດປະສົງໃນການຈັດກອງປະຊຸມເຜີຍແຜ່ກົດໝາຍ ໃນຄັ້ງນີ້ ກໍ່ເພື່ອໃຫ້ບັນດາພະນັກງານ, ຄູ-ອາຈານ, ນັກສຶກສາພາຍໃນໂຮງຮຽນການເມືອງ ແລະ ການປົກຄອງ ແຂວງຫົວພັນ ໄດ້ເຊື່ອມຊຶມ, ເຂົ້າໃຈເຖິງລະບຽບ, ຫຼັກການ ແລະ ມາດ

ຕະການ ກ່ຽວກັບການເຄື່ອນໄຫວ, ຄຸ້ມຄອງ, ຕິດຕາມກວດກາທຸລະກິດ ແລະ ທຸລະກຳເງິນຕາຕ່າງປະເທດ ເພື່ອໃຫ້ມີປະສິດທິພາບ-ປະສິດທິຜົນ, ຖືກຕ້ອງ ແນ່ໃສ່ຍົກສູງຄຸນຄ່າ ແລະ ສະຖຽລະພາບຂອງເງິນຕາແຫ່ງຊາດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.





ໃນກອງປະຊຸມ ທ່ານ ວຽງວິໄລ ສຸດທິຈັກ ຫົວໜ້າພະແນກຫ້ອງການ-ຈັດຕັ້ງ ທຫລ.ຊຂ ໄດ້ຂຶ້ນບັນຍາຍກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ເຊິ່ງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ທີ່ນຳມາເຜີຍແຜ່ໃນຄັ້ງນີ້ ປະກອບມີ IX ພາກ, 08 ໝວດ ແລະ 54 ມາດຕາ. ຫຼັງຈາກນັ້ນ, ບັນດາຜູ້ເຂົ້າຮ່ວມກອງປະຊຸມກໍ່ໄດ້ຜັດປ່ຽນກັນຂຶ້ນປະກອບຄຳຄິດຄຳເຫັນ, ປຶກສາຫາລືແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ຢ່າງເປັນຂະບວນຟົດຟື້ນ.

ໃນຕອນທ້າຍ ທ່ານ ນາງ ແຍງເພັດ ບຸນມະນີໄຊ ຜູ້ອຳນວຍການໂຮງຮຽນການເມືອງ ແລະ ການປົກຄອງ ແຂວງຫົວພັນ ຍັງໄດ້ຍ້ອງຍໍຊົມເຊີຍຕໍ່ຜູ້ເຂົ້າຮ່ວມກອງປະຊຸມທີ່ໄດ້ເປັນເຈົ້າການ ແລະ ມີຄວາມຮັບຜິດຊອບສູງ ໃນການຈັດຕັ້ງປະຕິບັດ ແລະ ເຜີຍແຜ່ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດຢ່າງລວມສູນ ແລະ ເປັນເອກະພາບ ເພື່ອຮັບປະກັນສະຖຽລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ, ຊ່ວຍຊຸກຍູ້, ປຸກລະດົມ ໃຫ້ພໍ່ແມ່ປະຊາຊົນ ແລະ ການຈັດຕັ້ງທຸກພາກສ່ວນໃຫ້ການຮ່ວມມື ເຂົ້າຮ່ວມໃນການເຄື່ອນໄຫວ ແລະ ຄຸ້ມຄອງເງິນຕາຕ່າງປະເທດ ດ້ວຍການສ້າງຈິດສຳນຶກໃຫ້ສັງຄົມນຳໃຊ້ເງິນກີບ ແລະ ເງິນຕາຕ່າງປະເທດໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**✍ ຂ່າວ: ສຸກສະຫວັນ ພົມມະວົງ**
**ພາບ: ນ.ຄຳສາຍ ພົມມະວີ**